ຫ້ອງການໄອຍະການປະຊາຊົນສູງສຸດ
ເວລາ 15:10
ວັນທີ 21.08.18
ໄດ້ເລກທີ 116
ຜູ້ຮັບ ເລ21

[illegible] ເລ21
021353689.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ໃບຄຳຮ້ອງ

ຮຽນ: ທ່ານ ຫົວໜ້າອົງການໄອຍະການປະຊາຊົນສູງສຸດທີ່ນັບຖື
ເລື່ອງ: ຂໍຮື້ຟື້ນຄະດີແພ່ງຄືນໃໝ່

ຂ້າພະເຈົ້າ ~~ທ້າວ~~ ຫຼື ນາງ ບຸນເຫັນ ລັກປະສິດ ອາຍຸ 60 ປີ, ອາຊີບ ຄົນຂາຍ
ສັນຊາດ ລາວ ສາສະໜາ ພຸດ ປັດຈຸບັນຢູ່ບ້ານ ສີຖານໂລກ ໜ່ວຍ 05
ເມືອງ ຫຼວງພະບາງ ແຂວງ ຫຼວງພະບາງ ໂທລະສັບ 021...; 020 22133456

ຂຽນຄຳຮ້ອງໃນຖານະ
- ໂຈດ
- ຜູ້ຕາງໜ້າໂຈດ
- ຈຳເລີຍ ✓
- ຜູ້ຕາງໜ້າຈຳເລີຍ
- ບຸກຄົນທີສາມ
- ທະນາຍຄວາມ

ຂໍສະເໜີມາຍັງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເພື່ອໃຫ້ສະເໜີຮື້ຟື້ນຄະດີຄືນໃໝ່ ກ່ຽວກັບຄະດີ
ແພ່ງ: ແຮງງານ ການຄ້າ ຄອບຄົວ ເດັກ
ເລກທີ 17 / ຂ.ສ.ພ ລົງວັນທີ 11 / 12 / 2015 ຂອງສານ ປະຊາຊົນແຂວງຫຼວງພະບາງທີ່ມີ
ຄຳຕັດສິນ ຄຳພິພາກສາ ✓ ຄຳສັ່ງ ຄຳຊີ້ຂາດ
ສະບັບເລກທີ 63 / ສຂ.ພ ລົງວັນທີ 25 / 10 / 2017 ທີ່ໃຊ້ໄດ້ຢ່າງເດັດຂາດ.

ລະຫວ່າງ:

- ທ້າວ ຫຼື ~~ນາງ~~ ເພັດສຳພອນ ອາຍຸ 52 ປີ, ອາຊີບ ທຸລະກິດ ສັນຊາດ ລາວ
ສາສະໜາ ພຸດ ປັດຈຸບັນຢູ່ບ້ານ ວຽງແກ້ວ ໜ່ວຍ 2 ເມືອງ ຫຼວງພະບາງ
ແຂວງ ຫຼວງພະບາງ ໂຈດ (ຖ້າມີໂຈດຫຼາຍຄົນໃຫ້ຂຽນຄັດຕິດໃສ່ຕື່ມ).
- ~~ທ້າວ~~ ຫຼື ນາງ ບຸນທັນ ອາຍຸ 58 ປີ, ອາຊີບ ຄົນຂາຍ ສັນຊາດ ລາວ
ສາສະໜາ ພຸດ ປັດຈຸບັນຢູ່ບ້ານ ສີຖານໂລກ ໜ່ວຍ 5 ເມືອງ ຫຼວງພະບາງ
ແຂວງ ຫຼວງພະບາງ ຈຳເລີຍ. (ຖ້າມີຈຳເລີຍຫຼາຍຄົນໃຫ້ຂຽນຄັດຕິດໃສ່ຕື່ມ).

ກ່ຽວເລື່ອງ: ຂໍຄືນເງິນຄືນ

I. ເນື້ອໃນຄະດີ (ເລົ່າປະຫວັດຄວາມເປັນມາຂອງເລື່ອງໂດຍຫຍໍ້), ຫຼີກເວັ້ນການເລົ່າເຫດການທີ່ບໍ່ຈຳເປັນ.

ສ່ວນເນື້ອໃນລາຍລະອຽດແມ່ນໄດ້
ລາຍງານຕິດຄັດຢູ່ຕາມທ້າຍ

ການພິຈາລະນາຕັດສິນຂອງສານແຕ່ລະຂັ້ນ (ໃຫ້ສຳເນົາຄຳຕັດສິນຂອງສານແຕ່ລະຂັ້ນຕິດຄັດມາພ້ອມ).

1. ສານຂັ້ນຕົ້ນເຊັ່ນ: ສານເຂດ ສານແຂວງ ສານນະຄອນຫຼວງ

ໄດ້ຕັດສິນ ສະບັບເລກທີ................................ລົງວັນທີ................................

2. ສານຂັ້ນອຸທອນເຊັ່ນ: ແຂວງ ນະຄອນຫຼວງ ພາກ

ໄດ້ພິພາກສາ ສະບັບເລກທີ................................ລົງວັນທີ................................

3. ສານຂັ້ນລົບລ້າງພາກ: ເໜືອ ກາງ ໃຕ້ , ສານປະຊາຊົນສູງສຸດ

ໄດ້ພິພາກສາ ສະບັບເລກທີ................................ລົງວັນທີ................................

ສາເຫດທີ່ຂໍຮື້ຟື້ນຄືນໃໝ່

1. ................................

2. ................................

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

............................

# ຄໍາຮ້ອງ

## ຂໍຮື້ຟື້ນຄະດີຄືນໃຫມ່

**ຮຽນ: ທ່ານຫົວໜ້າອົງການໄອຍະການປະຊາຊົນສູງສຸດ ທີ່ນັບຖື**

**ເລື່ອງ: ຂໍຮື້ຟື້ນຄະດີຄືນໃຫມ່**

ຂ້າພະເຈົ້າ ນາງ ບຸນທັນ ລັກປະສິດ ອາຍຸ 60 ປີ,ສັນຊາດລາວ,ອາຊີບຄ້າຂາຍ,ປັດຈຸບັນຢູ່ບ້ານ ສັງຄະໂລກ ໜ່ວຍ 05 ເຮືອນເລກທີ 90 ນະຄອນຫຼວງພະບາງ ແຂວງ ຫຼວງພະບາງ ເບີໂທລະສັບ 020 ...22133456....... ໃນຖານະ(ຈໍາເລີຍ).

ຂໍສະເໜີຮຽນມາຍັງທ່ານຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເພື່ອຂໍໃຫ້ທ່ານໄດ້ຮື້ຟື້ນຄະດີຄືນໃຫມ່ ກ່ຽວກັບຄໍາພິພາກສາສະບັບເລກທີ່ 63/ລລ.ພ,ລົງວັນທີ່ 25 ຕຸລາ 2017. ທີ່ໃຊ້ໄດ້ຢ່າງເດັດຂາດໃນສໍານວນຄະດີແພ່ງ ເລກທີ່17/ຂຕ.ພ,ລົງວັນທີ່ 11 ທັນວາ 2015 ຂອງສານປະຊາຊົນຂັ້ນຕົ້ນແຂວງ ຫຼວງພະບາງ.

ລະຫວ່າງ

ທ້າວ ເພັດຈໍາພອນ ຂຸນດາລາ .......................................................................................ໂຈດ

ທ້າວ ບຸນທະວີ ຄໍາລະຍົກ(ທະນາຍຄວາມໂຈດ).

ນາງ ບຸນທັນ.............................................................................................................ຈໍາເລີຍ

ທ້າວ ແສງວົງຈິດ ຢ່າງວິໄລ.........................................................................ບຸກຄົນທີ່ສາມ

ກ່ຽວເລື່ອງ: ທວງເອົາເງິນຄືນ

I. **ເນື້ອຄະດີ(ເລົ່າປະຫວັດຄວາມເປັນມາຂອງເລື່ອງໂດຍຫຍໍ້)ຫຼີກເວັ້ນການເລົ່າເຫດການທີ່ບໍ່ຈໍາເປັນ**

ໃນເບື້ອງຕົ້ນຂ້າພະເຈົ້າແມ່ນໄດ້ຂາຍດິນຈໍານວນ 2 ຕອນໃຫ້ແກ່ ທ້າວ ເພັດຈໍາພອນ ຂຸນດາລາ(ໂຈດ) ແທ້.ສ່ວນການທີ່ທ້າວ ເພັດຈໍາພອນ ຂຸນດາລາ ໄດ້ຮ້ອງຟ້ອງຕົນຂຶ້ນມາຍັງສານປະຊາຊົນແຂວງ ຫຼວງພະບາງ ເພື່ອທວງໃຫ້ຕົນສົ່ງເງິນຄ່າທີ່ດິນຈໍານວນ 5,952,005 ບາດ.ເຊິ່ງໄດ້ອ້າງວ່າທີ່ດິນຕອນທີ່ສອງຕາມໃບຕາດິນ ສະບັບເລກທີ່ 223 ລົງວັນທີ່ 12 ກັນຍາ 2003 ມີເນື້ອທີ່ 5,868 ຕາແມັດ ແລະ ຂາດຫາຍໄປ 1 ເຮັກຕານັ້ນ

ຕົນແມ່ນບໍ່ຮັບຮູ້ເພາະວ່າໃບຕາດິນທັງສອງສະບັບນັ້ນ ເປັນໃບຕາດິນແຂບຄຳ ເຊິ່ງແມ່ນອີງການລັດເປັນຜູ້ອອກໃຫ້, ກ່ອນຈະມີການຊື້-ຂາຍເກີດຂຶ້ນຕົນໄດ້ພາຜູ້ຊື້ໄປກວດກາຂອບເຂດແດນຂອງທີ່ດິນຕົວຈິງແລ້ວວ່າຕິດກັບໃຜແດ່ ແລະ ຕົນກໍ່ບອກວ່າຂາຍຍົກທັງໝົດຕອນເລີຍ ບໍ່ແມ່ນຂາຍເປັນຕາແມັດ ທ້າວ ເພັດຈຳພອນ(ໂຈດ)ກໍ່ຮັບຮູ້ ແລະ ເຫັນທີ່ດິນຕົວຈິງແລ້ວເພາະວ່າການຂາຍທີ່ດິນແມ່ນການຂາຍຍົກ ຖ້າເນື້ອທີ່ດິນຫາກບໍ່ຄົບຕາມການກ່າວອ້າງແທ້ ຕົນກໍ່ຈະຂາຍທັງສອງຕອນໃນລາຄາ 9,600,000 ບາດນີ້ຄືກັນ ເພາະວ່າທີ່ດິນຂອງຕົນມີສອງຕອນນັ້ນຕົນແມ່ນຈະຂາຍຍົກທັງໝົດ ແລະ ກ່ອນໜ້າ ຫຼື ພາຍຫຼັງມີການຊື້-ຂາຍຕົນກໍ່ບໍ່ເຄີຍແບ່ງຂາຍດິນໃຫ້ໃຜຈັກເທື່ອ, ສ່ວນການທີ່ໃບຕາດິນທີ່ພິມໃສ່ເກີນ 1 ເຣັກຕານັ້ນແມ່ນຄວາມຜິດພາດດ້ານເຕັກນິກຂອງວິຊາການ ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ຫຼວງພະບາງ ບໍ່ແມ່ນຄວາມຜິດຂອງຕົນເອງແຕ່ຢ່າງໃດ. ການທີ່ຜູ້ກ່າວຟ້ອງມາຄິດໄລ່ສະເລ່ຍເປັນຕາແມັດໂດຍອ້າງວ່າເນື້ອທີ່ຫຼຸດ ແລະ ຂໍເອົາເງິນຄືນຈຳນວນ 5,952,055 ບາດນັ້ນຕົນແມ່ນບໍ່ຮັບຮູ້. ເພາະການຊື້-ຂາຍແມ່ນຕົນເຮັດຂຶ້ນດ້ວຍຄວາມບໍລິສຸດໃຈ ໂດຍຜ່ານອຳນາດການປົກຄອງບ້ານ ແລະ ພາຍານຖືກຕ້ອງຕາມຫຼັກການທຸກຢ່າງ.ສະນັ້ນ ຕົນແມ່ນບໍ່ຍອມສົ່ງເງິນເດັດຂາດ.

II. **ການພິຈາລະນາຂອງສານແຕ່ລະຂັ້ນ.**

1. ສານຂັ້ນຕົ້ນແຂວງ ຫຼວງພະບາງ ສະບັບເລກທີ່ 012/ຂຕ.ພ,ລົງວັນທີ່ 14 ພະຈິກ 2016 ບອກວ່າ: ຄຳຮ້ອງຟ້ອງຂອງທ້າວ ເພັດຈຳພອນ ຊຸກດາລາ(ໂຈດ)ສະບັບລົງວັນທີ່ 20 ພະຈິກ 2015 ມີເຫດຜົນບາງສ່ວນ ສານຈຶ່ງນຳມາພິຈາລະນາ.

   ສ່ວນຄຳແກ້ຟ້ອງຂອງນາງ ບຸນທັນ (ຈຳເລີຍ)ສະບັບລົງວັນທີ່ 10 ທັນວາ 2015 ບໍ່ມີເຫດຜົນສານຈຶ່ງບໍ່ນຳມາພິຈາລະນາ.

   ໃຫ້ນາງ ບຸນທັນ(ຈຳເລີຍ)ສົ່ງເງິນຈຳນວນ 5,951,273 ບາດຄືນໃຫ້ແກ່ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ຖ້າວ່ານາງ ບຸນທັນ ຫາກບໍ່ມີຄວາມສາມາດໃຊ້ແທນເງິນຈຳນວນ 5,951,273 ບາດ ໃຫ້ແກ່ ທ້າວ ເພັດຈຳພອນ (ໂຈດ)ແມ່ນໃຫ້ປະກາດຂາຍທີ່ດິນພ້ອມເຮືອນ ແລະ ໃຫ້ນຳເອົາເງິນຢູ່ເລກບັນຊີເງິນຝາກຢູ່ທະນາຄານການຄ້າຕ່າງປະເທດ ມະຫາຊົນ ສາຂາ ແຂວງ ຫຼວງພະບາງ ອອກຊື່ນາງ ບຸນທັນ (ຈຳເລີຍ)ຕາມຄຳສັ່ງອາຍັດຊັບສະບັບເລກທີ່ 008/ຂຕ.ພ,ລົງວັນທີ່ 10 ສິງຫາ 2016 ມາໃຊ້ແທນໃຫ້ແກ່ໂຈດຄົບຕາມຈຳນວນ 5,951,273 ບາດ ຖ້າຫາກວ່າຍັງບໍ່ພໍເປັນເງິນຈຳນວນເທົ່າໃດແມ່ນໃຫ້(ຈຳເລີຍ)ຊອກມາໃຫ້ແກ່ໂຈດໃຫ້ຄົບ.

   ໃຫ້ນາງ ບຸນທັນ(ຈຳເລີຍ)ເສຍເງິນອາກອນຂອງລັດຈຳນວນ 119.025 ບາດພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍໃນເວລາປະຕິບັດຄຳຕັດສິນຂອງສານ.

   ໃຫ້ນາງ ບຸນທັນ(ຈຳເລີຍ)ໃຊ້ແທນເງິນຄ່າວິຊາການລົງກວດກາທີ່ດິນຈຳນວ 1.200.000 ກີບຄືນໃຫ້ແກ່(ໂຈດ).

   ໃຫ້ນາງ ບຸນທັນ(ຈຳເລີຍ)ໃຊ້ແທນເງິນຄ່າວິຊາການລົງກວດກາອາຍັດທີ່ດິນຈຳນວນ 2.000.000 ກີບຄືນໃຫ້ແກ່(ໂຈດ)

2. ຄຳພິພາກສາຂອງສານຂັ້ນອຸທອນ ສະບັບເລກທີ 005/ອທ.ພ,ລົງວັນທີ 31 ມີນາ 2017 ຂອງສານປະຊາຊົນພາກເໜືອ ແຂວງ ຫຼວງພະບາງບອກວ່າ: ຄຳຮ້ອງຂໍອຸທອນສະບັບລົງວັນທີ 2 ທັນວາ 2016 ຂອງນາງ ບຸນທັນ(ຈຳເລີຍ)ບໍ່ມີເຫດຜົນພຽງພໍ ແຕ່ເປັນພື້ນຖານໃຫ້ສານພິຈາລະນາຄືນໃຫມ່ໃຫ້ຖືກຕ້ອງຕາມກົດໝາຍ.

ພິພາກສາ: ປ່ຽນແປງຄຳຕັດສິນສະບັບເລກທີ 012/ຂຕ.ພ,ລົງວັນທີ 14 ພະຈິກ 2016 ຂອງສານປະຊາຊົນຂັ້ນຕົ້ນແຂວງ ຫຼວງພະບາງ ບາງສ່ວນບອກວ່າ: ໃຫ້ທ້າວ ເພັດຈຳພອນ(ໂຈດ)ເສຍອາກອນຂອງລັດ 2%ຂອງມູນຄ່າ 750 ບາດທີ່ຮ້ອງຟ້ອງເກີນ ແລະ ໃຫ້ຈຳເລີຍເສຍອາກອນຂອງລັດ 2%ຂອງມູນຄ່າ 5,951,273 ບາດທີ່ເສຍຄະດີ. ປ່ຽນແປງພາກດ້ວຍເຫດນີ້ໃຫ້ກົງກັບພາກວິນິດໄສບອກວ່າ: ໃຫ້ລົບລ້າງສັນຍາຊື້-ຂາຍສະບັບເລກທີ 01/ສຄລ,ລົງວັນທີ 8 ມັງກອນ 2012 ບາງສ່ວນ,ລົບລ້າງໃສສ່ວນທີ່ເປັນໂມຄະຄື: ເນື້ອທີ່ 1 ເຮັກຕາເທົ່າກັບ 10.000 ຕາແມັດຖິ້ມ ພ້ອມທັງລົບລ້າງໃບຕາດິນສະບັບເລກທີ 223 ລົງວັນທີ 7 ກຸມພາ 2014 ມີເນື້ອທີ່ 1 ເຮັກຕາ 5,868 ຕາແມັດ. ໃຫ້ທ້າວ ເພັດຈຳພອນ(ໂຈດ) ແລະ ທ້າວ ແສງວິງຈິດ(ບຸກຄົນທີ່ສາມ)ຖິ້ມ ແລ້ວມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ຫຼວງພະບາງອອກໃບຕາດິນໃຫມ່ທີ່ມີເນື້ອ ທີ່ 5,868 ຕາແມັດໃຫ້ແກ່ ທ້າວ ເພັດຈຳພອນ ແລະ ທ້າວ ແສງວິງຈິດ ນອກນັ້ນແມ່ນຢັ້ງຢືນເອົາຕາມຄຳຕັດສິນຂອງສານປະຊາຊົນຂັ້ນຕົ້ນແຂວງ ຫຼວງພະບາງ ທັງໝົດ.

3. ຄຳພິພາກສາຂອງສານຂັ້ນລົບລ້າງ ສະບັບເລກທີ 63/ລລ.ພ,ລົງວັນທີ 25 ຕຸລາ 2017 ບອກວ່າ: ຮັບເອົາຄຳຮ້ອງຂໍລົບລ້າງຕາມຂາເຂົ້າສະບັບເລກທີ 392,ລົງວັນທີ 10 ພະຈິກ 2017 ຂອງນາງ ບຸນທັນ (ຈຳເລີຍ) ມາພິຈາລະນາ.

ຕາມກົດໝາຍ: ຄຳຮ້ອງຂໍລົບລ້າງສະບັບດັ່ງກ່າວບໍ່ມີເຫດຜົນພຽງພໍທາງດ້ານກົດໝາຍ.

ພິພາກສາ: ຍົກເລີກຄຳຮ້ອງຂໍລົບລ້າງສະບັບດັ່ງກ່າວຖິ້ມ ແລ້ວຢັ້ງຢືນເອົາຕາມຄຳພິພາກສາສະບັບເລກທີ 005/ອທ.ພ,ລົງວັນທີ 31 ມີນາ 2017 ຂອງສານປະຊາຊົນພາກເໜືອຂັ້ນອຸທອນທັງໝົດ.

III. ບັນຫາຂໍຮື້ຟື້ນຄືນໃຫມ່:

1. ສັນຍາຊື້-ຂາຍທີ່ດິນ ສະບັບເລກທີ 01/ສຄລ,ລົງວັນທີ 8/1/2012 ແມ່ນຂ້າພະເຈົ້າຂາຍຍົກທັງໝົດສອງຕອນ ໃນລາຄາ 9.600.000 ບາດ,ບໍ່ແມ່ນຂາຍເປັນແມັດກາເລ ຫຼື ຕາແມັດ.
2. ການທີ່ໃບຕາດິນສະບັບເລກທີ 223 ລົງວັນທີ 7 ກຸມພາ 2014 ມີເນື້ອທີ່ 1 ເຮັກຕາ 5.868 ຕາແມັດແມ່ນທາງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຊິ່ງເປັນອົງການຂອງລັດຖະບານເປັນຜູ້ອອກໃຫ້ ແລະ ທາງພາກສ່ວນດັ່ງກ່າວກໍ່ໄດ້ຢັ້ງຢືນແລ້ວວ່າແມ່ນທາງວິຊາການເຮັດຜິດ ບໍ່ແມ່ນຂ້າພະເຈົ້າເປັນຜູ້ເຮັດ ສະນັ້ນ ຈະມາອ້າງວ່າເນື້ອທີ່ບໍ່ຄົບຕາມໃບຕາດິນແມ່ນບໍ່ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ
3. ກ່ອນຈະມີການເຊັນສັນຍາຊື້-ຂາຍ ຕົນກໍ່ໄດ້ພາທ້າວ ເພັດຈຳພອນ(ໂຈດ)ໄປເບິ່ງຕອນດິນຂອງຕົນທຸກຂອບເຂດ,ທຸກດ້ານຕິດກັບໃຜແດ່ຜູ້ກ່ຽວກໍ່ເຫັນດີ ແລະ ຕົກລົງເອົາຕາມລາຄານີ້ດ້ວຍຄວາມພໍໃຈ.

4. ສານຫາກພິພາກສາວ່າໃຫ້ຕົນສົ່ງເງິນຈຳນວນ 5,951,273 ບາດ ຄືນໃຫ້ແກ່ຜູ້ກ່ຽວກໍ່ສະແດງວ່າຂ້າພະເຈົ້າເປັນຜູ້ຜິດ,ປອມແປງເອກະສານເອົາເອງຂຶ້ນມາ ແຕ່ຂ້າພະເຈົ້າແມ່ນບໍ່ແມ່ນຜູ້ອອກໃບຕາດິນ ແລະ ທາງອົງການທີ່ກ່ຽວຂ້ອງກໍ່ຢັ້ງຢືນແລ້ວວ່າແມ່ນຄວາມຜິດພາດທາງດ້ານເຕັກນິກຂອງວິຊາການເອງ. ສະນັ້ນ ກໍ່ສະແດງວ່າຂ້າພະເຈົ້າບໍ່ຜິດ ເພາະຕອນດິນຂອງຂ້າພະເຈົ້າມີເທົ່ານີ້ ແລະ ຂາຍໃນລາຄານີ້.

5. ຖ້າຫາກຂ້າພະເຈົ້າສົ່ງເງິນຈຳນວນ 5,951,273 ບາດ ຄືນໃຫ້ແກ່ຜູ້ກ່ຽວກໍ່ສະແດງວ່າຜູ້ກ່ຽວໄດ້ດິນຂອງຂ້າພະເຈົ້າຟຣີລ້າໆ ເພາະເງິນທີ່ສົ່ງຄືນແມ່ນກາຍເຄິ່ງ,ເພາະດິນຕອນດັ່ງກ່າວລາຄາແມ່ນສູງສົມຄວນ ແລະ ຂ້າພະເຈົ້າກໍ່ເປັນຜູ້ອັບປະໂຫຍດດິນກໍ່ເສຍ ເງິນກໍ່ໄດ້ສົ່ງຄືນ ເຫັນວ່າບໍ່ເປັນທຳສຳລັບຂ້າພະເຈົ້າ.

IV. ຫຼັກຖານໃໝ່:

1. ແມ່ນເຫດການທັງໝົດ ແລະ ບັນດາເອກະສານສັນຍາຊື້-ຂາຍທີ່ດິນທັງສອງຕອນ ແມ່ນການຊື້-ຂາຍ ດ້ວຍຄວາມພໍໃຈ ແລະ ເຕັມໃຈລະຫວ່າງສອງຝ່າຍທັງເລື່ອງລາຄາ ແລະ ຂອບເຂດ ເນື່ອງຈາກວ່າແມ່ນການຂາຍຍົກທັງໝົດຕອນບໍ່ແມ່ນຂາຍເປັນຕາແມັດ ແລະ ກ່ອນ ຫຼື ຫຼັງການຊື້-ຂາຍ ດິນກໍ່ບໍ່ເຄີຍແບ່ງ ຫຼື ແຍກແຕ່ຢ່າງໃດ ຍັງມີເນື້ອທີ່ ແລະ ຂອບເຂດຄືເກົ່າທັງໝົດ. ສະນັ້ນ ຜູ້ກ່ຽວຈະມາອ້າງວ່າດິນດັ່ງກ່າວບໍ່ຄົບ 1 ເຮັກຕາ ແລະ ຈະຂໍເງິນຄືນຕາມຈຳນວນທີ່ບໍ່ຄົບຄື: 5,951,273 ບາດ ແມ່ນບໍ່ຖືກຕ້ອງ ແລະ ຂ້າພະເຈົ້າບໍ່ສາມາດຈະສົ່ງຄືນໃຫ້ແກ່ຜູ້ກ່ຽວໄດ້ຍ້ອນວ່າຄວາມຜິດພາດແມ່ນພະນັກງານຂອງລັດທີ່ເຮັດຫຼົງເອງ ແລະ ເນື້ອທີ່ດິນກໍ່ຍັງຄົບຄືເກົ່າ.

ສະນັ້ນ ຂໍໃຫ້ທ່ານໄດ້ກວດການຢ່າງລະອຽດຮອບດ້ານ ພາວະວິໄສ ຄືນ ແລະ ຮື້ຟື້ນຄະດີຄືນໃໝ່ເພື່ອໃຫ້ຄວາມເປັນທຳແກ່ຂ້າພະເຈົ້າດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ທີ່: ຫຼວງພະບາງ,ວັນທີ 19 ສິງຫາ 2018

ຜູ້ຮ້ອງຂໍ

ຢັ້ງຢືນນາຍບ້ານໆ ສັງຄະໂລກ

ນາຍບ້ານ ບ້ານ ສັງຄະໂລກ

ຄຳພັນ ວົງສອນເພັດ